# ຫມວດ 1

ບົດທີ 1 ປຽບທຽບຫນັງສືຂ່າວປະເສີດ 3 ເຫຼັ້ມແລກ

ບົດທີ 2 ຂ່າວປະເສີດໂຢຮັນແລະລຳດັບເວລາ
ໃນປີທີ່ພະອົງຕຽມຕົວປ່າວປະກາດ

## ເປົາຫມາຍ

ຂໍໃຫ້ທ່ານອ່ານເປົາຫມາຍນີ້ດີໆ ບໍ່ແມ່ນເພື່ອຈະທ່ອງຂຶ້ນໃຈ ແຕ່ເພື່ອໃຫ້ທ່ານຮຽນຮູ້ສິ່ງທີ່ຈະສາມາດເຮັດໄດ້ໃນປະຊຸມ.

ຫຼັງຈາກທ່ານໄດ້ຮຽນ ຫມວດ 1 ນີ້ແລ້ວທ່ານຈະສາມາດເຮັດດັ່ງຕໍ່ໄປນີ້:

1. ໃຊ້ວິທີຮຽນໂດຍປຽບທຽບເພື່ອສຶກສາເລື່ອງປະຫວັດຊີວິດຂອງພະເຢຊູ ໃນຂ່າວປະເສີດ 3 ເຫຼັ້ມແລກ ແລະ ໂຢຮັນ.
2. ຍົກລາຍຊື່ເຫດການທັງ 9 ປະການ ໃນປີທີ່ພະອົງຕຽມຕົວ ຖືກຕາມລຳດັບເວລາທີ່ເກີດຂຶ້ນກ່ອນຫຼື ຕາມຫຼັງ 3 ປະການ ຢູ່ໃນມັດທາຍ ແລະ ອີກ 6 ປະການ ໃນໂຢຮັນ.
3. ໃຊ້ "ຕາຕະລາງປຽບທຽບຊີວິດຂອງໂຢຮັນບັບຕິສະໂຕ ກັບຊີວິດຂອງພະເຢຊູ" ເພື່ອປຽບທຽບຊີວິດຂອງ ໂຢຮັນ ກັບໄລຍະເວລາຂອງພະເຢຊູ.
4. ປຶກສາຫາລືກັບຫມູ່ໃນປະຊຸມ ເລື່ອງການຕຽມຕົວຂອງພວກສາວົກກ່ອນຈະອອກໄປປ່າວປະກາດຮ່ວມກັບພະເຢຊູ ແລະ ໃນທຸກວັນນີ້ ຜູ້ຮັບໃຊ້ຂອງພະອົງຕ້ອງມີການຕຽມຕົວໄວ້ໃນການອອກໄປປ່າວປະກາດ.